ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

===== 000 =====

ພັກປະຊາຊົນປະຕິວັດລາວ

ຄະນະເລຂາທິການສູນກາງພັກ ເລກທີ..21..../ຄລສພ

ກົມປ່າໄມ້
ຂາເຂົ້າ ເລກທີ 1442
ລົງວັນທີ 16/8/12

ນະຄອນຫລວງວຽງຈັນ, ວັນທີ.07./ 8 / 2012

## ຄຳສັ່ງແນະນຳເພີ່ມເຕີມ

**ເຖິງ** : ບັນດາສະຫາຍ ເລຂາຄະນະພັກ ກະຊວງ-ອົງການອ້ອມຂ້າງສູນກາງ, ເລຂາຄະນະພັກນະຄອນຫລວງວຽງຈັນ ແລະ ບັນດາແຂວງ, ເລຂາຄະນະພັກເມືອງ 51 ເມືອງທົດລອງ ໃນທົ່ວປະເທດ.

- ເພື່ອສືບຕໍ່ຊຸກຍູ້ການຈັດຕັ້ງປະຕິບັດ ມະຕິ 03 / ກມສພ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃນພາກຕົວຈິງ, ໂດຍສະເພາະແມ່ນ **ການເຮັດທົດລອງ** ຢູ່ນະຄອນຫລວງວຽງຈັນ ແລະ ທຸກແຂວງ; 51 ເມືອງ ແລະ 105 ບ້ານໃນທົ່ວປະເທດ, ໂດຍເລີ່ມແຕ່ ວັນທີ 1 / 10 / 2012 ນີ້ ຈົນຮອດສິ້ນເດືອນ 9 ປີ 2013 ໃຫ້ເຫັນຜົນອັນເປັນຮູບປະທຳ.

## ຄະນະເລຂາທິການສູນກາງພັກ ອອກຄຳສັ່ງແນະນຳເພີ່ມເຕີມ

1) ໃຫ້ບັນດາສະຫາຍ ເລຂາຄະນະພັກ ກະຊວງ, ອົງການອ້ອມຂ້າງສູນກາງ ໂດຍສະເພາະແມ່ນ 15 ກະຊວງ ທີ່ຢູ່ໃນເປົ້າໝາຍເຮັດທົດລອງນັ້ນ ເພີ່ມຄວາມເອົາໃຈໃສ່ຕໍ່ການຄົ້ນຄວ້າຜັນຂະຫຍາຍເນື້ອໃນຂອງມະຕິ 03 / ກມສພ, ຄຳສັ່ງແນະນຳ ເລກທີ 11 / ຄລສພ ແລະ ຄຳສັ່ງ ເລກທີ 16 ຂອງນາຍົກລັດຖະມົນຕີ ກ່ຽວກັບວຽກງານ 3 ສ້າງ ໃຫ້**ເປັນຂໍ້ຕົກລົງ, ເປັນຄຳສັ່ງ ຫລື ລະບຽບການລະອຽດຂອງຂະແໜງການຕົນ** ໂດຍມີການລົງທຶນກັບແຂວງ ແລະ ເມືອງ ທີ່ຢູ່ໃນເປົ້າໝາຍເຮັດທົດລອງ ເພື່ອປຶກສາຫາລື, ແນະນຳ-ອະທິບາຍ ບັນດາໜ້າວຽກ ທີ່ແຂວງ ແລະ ເມືອງ ຕ້ອງຮັບຜິດຊອບນັ້ນໃຫ້ຈະແຈ້ງ ໂດຍໃຫ້ສຳເລັດໃນກາງເດືອນ 9 / 2012 ນີ້ ເປັນຢ່າງຊ້າ.

- ບັນດານິຕິກຳ ຫລື ຂໍ້ຕົກລົງ, ລະບຽບການຕ່າງໆຂອງທຸກກະຊວງ, ອົງການທີ່ນຳໄປເຜີຍແຜ່ແນະນຳໃຫ້ແຂວງ, ເມືອງ ແລະ ບ້ານນັ້ນ ຕ້ອງສົ່ງໃຫ້ຄະນະຮັບຜິດຊອບຂັ້ນສູນກາງໜຶ່ງສະບັບ ເພື່ອຊາບ ແລະ ຕິດຕາມ.

2) ໃຫ້ບັນດາສະຫາຍເລຂາຄະນະພັກ ນະຄອນຫລວງ, ແຂວງ ແລະ ທັງໝົດ 51 ເມືອງທົດລອງ ເບິ່ງຄືນບ້ານເປົ້າໝາຍເຮັດທົດລອງ ເພື່ອຮັບປະກັນຄວາມສອດຄ່ອງກັບເງື່ອນໄຂ ທີ່ກຳນົດໄວ້ໃນຄຳສັ່ງແນະນຳ ເລກທີ 11/ຄລສພ ດັ່ງນີ້ :

❶ ຕ້ອງເປັນບ້ານເປົ້າໝາຍທີ່ຈະສ້າງເປັນບ້ານພັດທະນາ ແລະ ເປັນຕົວເມືອງນ້ອຍໃນຊົນນະບົດ ແລະ ນອນຢູ່ໃນຈຸດສຸມ ກຸ່ມບ້ານທີ່ລັດຖະບານໄດ້ຮັບຮອງເອົາແລ້ວ 64 ຈຸດສຸມ ແລະ ອີກ 167 ຈຸດສຸມຈັດສັນພູມລຳເນົາ.

❷ ຕ້ອງເປັນບ້ານທີ່ມີເງື່ອນໄຂສະດວກດ້ານການໄປມາໄດ້ທັງສອງລະດູ ແລະ ມີພື້ນຖານໂຄງລ່າງຮອງຮັບໃຫ້ແກ່ການຜະລິດ ແລະ ປັບປຸງຊີວິດການເປັນຢູ່ໂດຍພື້ນຖານ.

❸ ຕ້ອງເປັນບ້ານທີ່ມີລະບົບການຈັດຕັ້ງການເມືອງດີ, ຊາວບ້ານມີຄວາມສາມັກຄີເປັນປຶກແຜ່ນ.

❹ ຕ້ອງເປັນບ້ານທີ່ມີເງື່ອນໄຂເປີດກວ້າງການຜະລິດ ແລະ ການບໍລິການ, ທັງສາມາດສ້າງເປັນໃຈກາງກະຕຸ້ນການພັດທະນາບ້ານອື່ນໆ ໃຫ້ກາຍເປັນກຸ່ມບ້ານພັດທະນາໄດ້.

ສະນັ້ນ ຖ້າຫາກແຂວງ ແລະ ເມືອງໃດເຫັນວ່າຜ່ານມາໄດ້ເລືອກບ້ານເປົ້າໝາຍແລ້ວ, ແຕ່ບໍ່ສອດຄ່ອງກັບເງື່ອນໄຂທີ່ກຳນົດໄວ້ທັງ 4 ຂໍ້ນັ້ນ ກໍໃຫ້ຮີບຮ້ອນເລືອກ ແລະ ຕົກລົງເປັນເອກະພາບຄືນໃໝ່ແລ້ວຈຶ່ງລາຍງານຜ່ານກອງເລຂາ ໃຫ້ຄະນະຮັບຜິດຊອບຂັ້ນສູນກາງຊາບໂດຍໄວ.

3) ໃຫ້ກະຊວງແຜນການ ແລະ ການລົງທຶນ ອອກນິຕິກຳ ແລະ ບົດແນະນຳລະອຽດ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຄວາມຮັບຜິດຊອບໃຫ້ທ້ອງຖິ່ນໃນແຕ່ລະດ້ານທີ່ກ່ຽວຂ້ອງກັບວຽກງານແຜນການ ແລະ ການລົງທຶນ; ໃນນີ້ໃຫ້ໄຈ້ແຍກລະອຽດບາງດ້ານ ດັ່ງນີ້ :

+ ກຳນົດໃຫ້ແຈ້ງກ່ຽວກັບໂຄງການລົງທຶນຂອງລັດໃນສົກ ປີ 2012-2013 ນີ້ ເປັນຕົ້ນແມ່ນໂຄງການຈຸດສຸມ ແລະ ໂຄງການລົງທຶນຂອງພາກເອກະຊົນພາຍໃນ (ລວມທັງຂອງຄອບຄົວເອກະເທດ ) ແລະ ຕ່າງປະເທດ ວ່າມີໂຄງການໃດແດ່ທີ່ຈະມອບໃຫ້ ແຂວງ ແລະ ເມືອງ ເຮັດທົດລອງຮັບຜິດຊອບຄຸ້ມຄອງຢ່າງຂາດຕົວ.

+ ການແບ່ງຂັ້ນຄຸ້ມຄອງ ແລະ ການມອບຄວາມຮັບຜິດຊອບດັ່ງກ່າວນັ້ນ ຕ້ອງຕິດພັນກັບຄວາມສາມາດຕົວຈິງ ຂອງແຂວງ ແລະ ເມືອງ; ສະນັ້ນ ຈຶ່ງຄວນມີມາດຕະການຊ່ວຍເຫລືອແຂວງ ແລະ ເມືອງ ໃນດ້ານຕ່າງໆ ເປັນຕົ້ນແມ່ນດ້ານການປະກອບບຸກ

ຄະລະກອນ ແລະ ການຝຶກອົບຮົມ ຍົກລະດັບເຂົາເຈົ້າໃຫ້ມີຄວາມສາມາດປະຕິບັດໜ້າທີ່ຕາມຄວາມຮັບຜິດຊອບຂອງເຂົາເຈົ້າ.

4) ໃຫ້ກະຊວງການເງິນອອກນິຕິກຳ ແລະ ບົດແນະນຳລະອຽດ ກ່ຽວກັບການໃຫ້ເມືອງ ( ເຮັດທົດລອງ ) ເປັນ**ຫົວໜ່ວຍການເງິນຂັ້ນສອງ** ທີ່ຂຶ້ນກັບແຂວງ ໂດຍໃຫ້ເຈົ້າເມືອງມີອຳນາດສັ່ງຈ່າຍໄດ້ຕາມລະບຽບການ; ພ້ອມກັນນັ້ນ ກໍໃຫ້ກຳນົດຕາມເງື່ອນໄຂຂອງແຕ່ລະເມືອງໃຫ້ແຈ້ງວ່າ ແຕ່ລະເມືອງມີຄວາມຮັບຜິດຊອບຄຸ້ມຄອງ ດ້ານການເງິນ ງົບປະມານ ກໍຄື ລາຍຮັບລາຍຈ່າຍອັນໃດ ແລະ ມີໜ້າທີ່ຈັດເກັບພາສີ-ອາກອນ; ລວມທັງຄ່າທຳນຽມຕ່າງໆອັນໃດແດ່; ກຳນົດລະບຽບການຂຶ້ນບັນຊີ ແລະ ການລາຍງານ ເພື່ອໃຫ້ສາມາດຕິດຕາມກວດກາໄດ້ຢ່າງເປັນລະບົບ, ທັງສາມາດຮັບປະກັນການຄຸ້ມຄອງແບບລວມສູນເປັນເອກະພາບ.

- ໃຫ້ກະຊວງການເງິນອອກຂໍ້ຕົກລົງ ແລະ ບົດແນະນຳອັນລະອຽດຈະແຈ້ງ ກ່ຽວກັບລະບຽບການຈັດສັນ ແບ່ງປັນຜົນປະໂຫຍດໃຫ້ແກ່ທ້ອງຖິ່ນ ( ແຂວງ, ເມືອງ, ບ້ານ ) ຢ່າງເໝາະສົມ ເພື່ອໃຫ້ທ້ອງຖິ່ນມີຄວາມເປັນເຈົ້າການຮັບຜິດຊອບ ແລະ ມີຄວາມກະຕືລືລົ້ນຫລາຍຂຶ້ນ; ທັງເປັນການຈຳກັດ ການຕົກເຮ່ຍ ເສຍຫາຍ ຂອງລາຍຮັບ ແລະ ເກັບລາຍຮັບໃຫ້ໄດ້ຫລາຍຂຶ້ນບົນພື້ນຖານລະບຽບ ກົດໝາຍ ທີ່ວາງໄວ້.

- ການມອບຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ, ແຂວງ, ເມືອງ, ບ້ານ ໃນການຄຸ້ມຄອງ ແລະ ການຈັດເກັບລາຍຮັບນັ້ນ ຕ້ອງຕິດພັນກັບການຕິດຕາມ ກວດກາ ຂອງຂະແໜງການສາຍຕັ້ງຢ່າງເປັນລະບົບເປັນປົກກະຕິ; ພ້ອມກັນນັ້ນ ກໍຕ້ອງມີການຊ່ວຍເຫລືອແກ່ທ້ອງຖິ່ນ ໂດຍສະເພາະແມ່ນເມືອງ ແລະ ບ້ານ; ກ່ອນອື່ນແມ່ນຊ່ວຍດ້ານພະນັກງານວິຊາການ, ດ້ານການຝຶກອົບຮົມ, ດ້ານພາຫະນະ ແລະ ອຸປະກອນຮັບໃຊ້ ເພື່ອໃຫ້ເມືອງສາມາດເປັນຫົວໜ່ວຍງົບປະມານຂັ້ນສອງທີ່ຂຶ້ນກັບແຂວງໄດ້ເປັນກ້າວໆ.

- ໃຫ້ກະຊວງການເງິນເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງອື່ນໆຄົ້ນຄວ້າ**ອອກນະໂຍບາຍ ສົ່ງເສີມເປັນພິເສດ** ສະເພາະຜູ້ປະກອບການ ແລະ ຄອບຄົວປະຊາຊົນທີ່ລົງທຶນທຳການຜະລິດ-ທຸລະກິດ ຢູ່ໃນເມືອງວິລະຊົນ ແລະ ເມືອງທີ່ທຸກຍາກ ຫ່າງໄກສອກຫລີກທີ່ຢູ່ໃນເປົ້າໝາຍເຮັດທົດລອງ ໂດຍໃຫ້ທັນປະກາດໃຊ້ໃນເດືອນ 9 / 2012 ນີ້.

5) ໃຫ້ທະນາຄານແຫ່ງ ສປປ ລາວ ຊີ້ນຳບັນດາທະນາຄານທຸລະກິດຂອງລັດ ໂດຍສະເພາະແມ່ນທະນາຄານນະໂຍບາຍ ເພື່ອ**ຈັດສັນແຫລ່ງທຶນສະເພາະ ໄວ້ສະໜັບສະໜູນບັນດາເມືອງ ແລະ ບ້ານເປົ້າໝາຍເຮັດທົດລອງ** ແນໃສ່ຍູ້ແຮງການຜະລິດເປັນສິນຄ້າ ຕິດພັນກັບການແກ້ໄຂຄວາມທຸກຍາກ ຂອງຄອບຄົວ.

- ການສະໜອງສິນເຊື່ອທະນາຄານ ຕ້ອງເປັນໄປຕາມກົນໄກ ແລະ ແນໃສ່ບັນລຸວັດຖຸປະສົງ ດັ່ງນີ້ :

❶ ໃຫ້ມີຄອບຄົວຜະລິດສິນຄ້າເກີດຂຶ້ນຢ່າງແຜ່ຫລາຍ ແລະ ໝັ້ນຄົງ; ໂດຍໃຫ້ຄອບຄົວປະຊາຊົນໂຮມກັນເປັນກຸ່ມ ເພື່ອກູ້ຢືມ ແລະ ມີຄວາມຮັບຜິດຊອບຮ່ວມກັນ ໃນການນໍາໃຊ້ທຶນໃຫ້ມີປະສິດທິຜົນ, ສາມາດສົ່ງຕົ້ນທຶນ ແລະ ດອກເບ້ຍໃຫ້ທະນາຄານຄືນໄດ້.

❷ ຕ້ອງມີການຊ່ວຍໜູນທາງດ້ານວິຊາການໃຫ້ແກ່ກຸ່ມຄອບຄົວ ເພື່ອຮັບປະກັນໃຫ້ການປູກ-ການລ້ຽງ ຂອງປະຊົນໄດ້ຮັບຜົນດີ; ອັນນີ້ ທະນາຄານຕ້ອງໄດ້ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງວິຊາການສາຍຕັ້ງທີ່ກ່ຽວຂ້ອງ ເພື່ອຂະແໜງການນັ້ນ ແຕ່ງຕັ້ງພະນັກງານວິຊາການຮັບຜິດຊອບຊ່ວຍກຸ່ມປູກຝັງ-ລ້ຽງສັດ ຂອງປະຊາຊົນ.

❸ ສໍາລັບທະນາຄານເອງ ກໍຕ້ອງປັບປຸງລະບຽບການສິນເຊື່ອໃຫ້ກະທັດລັດ ຮັດກຸມຕື່ມອີກ; ກ່ອນອື່ນໝົດແມ່ນອັດຕາດອກເບ້ຍ ແລະ ໄລຍະເວລາ ຂອງການກູ້ຢືມໃຫ້ເໝາະສົມກັບຈຸດພິເສດ ຂອງການປູກຝັງ-ລ້ຽງສັດ ແຕ່ລະປະເພດ ຂອງປະຊາຊົນ; ທະນາຄານຕ້ອງລົງເລິກເຖິງຮາກຖານປະຊາຊົນ ເພື່ອອະທິບາຍໃຫ້ປະຊາຊົນເຂົ້າໃຈ ກ່ຽວກັບລະບຽບການ ແລະ ຜົນປະໂຫຍດ ຂອງການໄດ້ຮັບໃຊ້ສິນເຊື່ອ ທັງນີ້ ກໍເພື່ອໃຫ້ເຂົາເຈົ້າກ້າຫານ ຮັບເອົາສິນເຊື່ອ, ຮູ້ນໍາໃຊ້ສິນເຊື່ອດ້ວຍຄວາມຮັບຜິດຊອບ ແລະ ມີປະສິດທິຜົນ.

6) ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ລົງສົມທົບກັບແຕ່ລະແຂວງ ແລະ ເມືອງເປົ້າໝາຍເຮັດທົດລອງ ເພື່ອພ້ອມກັນຄົ້ນຄວ້າກ່ຽວກັບ**ໂຄງການຈຸດສຸມ ທີ່ເປັນທ່າແຮງດ້ານການຜະລິດເປັນສິນຄ້າ ຂອງບ້ານທີ່ຈະສ້າງເປັນບ້ານພັດທະນາ**; ຕ້ອງຮັບປະກັນໃຫ້ແຕ່ລະບ້ານມີໂຄງການຜະລິດເປັນສິນຄ້າຢ່າງໜ້ອຍໜຶ່ງໂຄງການ; ພ້ອມກັນນັ້ນ ກໍໃຫ້ຄົ້ນຄວ້າແຕ່ງຕັ້ງພະນັກງານວິຊາການຜູ້ໜຶ່ງຫາສອງຄົນ ຮັບຜິດຊອບໂຄງການນັ້ນ ແລະ ໃຫ້ປະຈໍາການຢູ່ຮາກຖານ ເພື່ອນໍາພາປະຊາຊົນເຮັດຕົວຈິງ, ພ້ອມນັ້ນ ກໍເຜີຍແຜ່ ແນະນໍາຄວາມຮູ້ກ່ຽວກັບການປູກຝັງລ້ຽງສັດ, ການກັນພະຍາດ ແລະ ປາບສັດຕູພືດ ໃຫ້ແກ່ຊາວກະສິກອນ ເພື່ອໃຫ້ເຂົາເຈົ້າມີເງື່ອນໄຂຍົກສູງສະມັດຖະພາບ ການຜະລິດຂອງຕົນ.

7) ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ລົງສົມທົບກັບແຂວງ ແລະ ບັນດາເມືອງທົດລອງເພື່ອກວດກາໃຫ້ລະອຽດ ແລະ ກໍານົດໃຫ້ແຈ້ງ ວ່າໃນແຕ່ລະກິດຈະການ ໂຄງການລົງທຶນດ້ານພະລັງງານ ແລະ ບໍ່ແຮ່ ( ທັງຂອງພາຍໃນ ແລະ ຂອງຕ່າງປະເທດ ) ທີ່ຕັ້ງຢູ່ໃນພື້ນທີ່ຂອງແຂວງ ແລະ ເມືອງນັ້ນ ມີອັນໃດແດ່ທີ່ຂຶ້ນກັບຄວາມຮັບຜິດຊອບຂອງກະຊວງ, ມີອັນໃດແດ່ຂຶ້ນກັບຄວາມຮັບຜິດຊອບຄຸ້ມຄອງ ຂອງແຂວງ, ເມືອງ ແລະ ບ້ານ ໃນນີ້ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງ ການເຄື່ອນໄຫວຕົວຈິງ ຂອງຜູ້ລົງທຶນໃຫ້ເປັນໄປຕາມກົດໝາຍ ແລະ ຂໍ້ຜູກພັນສັນຍາ, ພ້ອມກັນນັ້ນ ກໍຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ການຮັກສາສິ່ງ

ແວດລ້ອມ ແລະ ແກ້ໄຂຜົນກະທົບຕໍ່ສັງຄົມ, ລວມທັງການແບ່ງປັນຜົນປະໂຫຍດໃຫ້ແກ່ທ້ອງຖິ່ນ ( ແຂວງ-ເມືອງ-ບ້ານ ) ຢ່າງເຫມາະສົມ ເພື່ອໃຫ້ທ້ອງຖິ່ນມີເງື່ອນໄຂພັດທະນາຕົນເອງໄດ້ເປັນກ້າວໆ.

8) ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລົງສົມທົບກັບແຂວງ ແລະ ເມືອງເປົ້າຫມາຍເຮັດທົດລອງ ເພື່ອກຳນົດຄວາມຮັບຜິດຊອບໃນການຄຸ້ມຄອງໃຫ້ແຂວງ ແລະ ເມືອງ ຢ່າງຈະແຈ້ງກ່ຽວກັບທີ່ດິນ, ປ່າໄມ້, ແຫລ່ງນ້ຳ... ໃນນີ້ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງທີ່ດິນ ການອອກໃບຢັ້ງຢືນສິດນຳໃຊ້ທີ່ດິນ ຢູ່ໃນເມືອງ ແລະ ບ້ານ ໃຫ້ລະອຽດຈະແຈ້ງ ເພື່ອໃຫ້ປະຊາຊົນຊາວຊົນນະບົດ ຢູ່ປະເທດເຮົາ ມີທີ່ດິນ ເພື່ອເປັນບ່ອນທຳມາຫາກິນ ແລະ ຕັ້ງຖິ່ນຖານພູມລຳເນົາຄົງທີ່; ໃຫ້ແຕ່ລະບ້ານ ຫລື ກຸ່ມບ້ານມີດິນ ແລະ ປ່າໄມ້ຊຸມຊົນ ເພື່ອເປັນບ່ອນລ້ຽງສັດ ( ລ້ຽງງົວ - ລ້ຽງຄວາຍ ), ເພື່ອໃຊ້ເປັນປ່າຊ້າ ແລະ ສາທາລະນະປະໂຫຍດອື່ນໆ.

- ໃຫ້ສົມທົບກັບບັນດາກະຊວງ-ຂະແຫນງການກ່ຽວຂ້ອງ ແລະ ທ້ອງຖິ່ນ ເພື່ອກວດຄືນເຂດພື້ນທີ່ ທີ່ໄດ້ອະນຸຍາດໃຫ້ສຳປະທານທີ່ດິນ ທີ່ຜ່ານມາ; ຖ້າຫາກເຫັນວ່າບ່ອນໃດມີການລ່ວງລ້ຳເອົາດິນຂອງປະຊາຊົນ ຫລື ລ່ວງລ້ຳເອົາດິນ-ປ່າໄມ້ຊຸມຊົນຂອງບ້ານ ກໍຕ້ອງມີການແກ້ໄຂຢ່າງເດັດຂາດ **ບົນພື້ນຖານຫລັກການທີ່ວ່າ ໃຫ້ປະຊາຊົນເຮົາມີສິດຄອບຄອງ ແລະ ນຳໃຊ້ທີ່ດິນ ເພື່ອຮັບປະກັນໃຫ້ເຂົາເຈົ້າມີບ່ອນທຳການຜະລິດ ເປັນຂອງຕົນເອງ ເພື່ອແກ້ໄຂຄວາມທຸກຍາກ ແລະ ສ້າງຄວາມພໍຢູ່ພໍກິນ ໃນຄອບຄົວ, ໃຫ້ບ້ານມີດິນ ແລະ ປ່າໄມ້ ເພື່ອລ້ຽງສັດ ແລະ ນຳໃຊ້ສາທາລະນະປະໂຫຍດ.**

- ຢູ່ບ່ອນໃດມີປ່າສະຫງວນ ( ແຫ່ງຊາດ ແລະ ທ້ອງຖິ່ນ ) ກໍໃຫ້ມີການຄົ້ນຄວ້າຈັດຕັ້ງມອບຫມາຍໃຫ້ຊຸມຊົນຮັບຜິດຊອບປົກປັກຮັກສາປ່າ ໂດຍມີການຈັດສັນເປັນອາຊີບ ທີ່ມີລາຍໄດ້ຢ່າງຫມາະສົມ.

9) ໃຫ້ກະຊວງສຶກສາທິການ ແລະ ກິລາ; ກະຊວງສາທາລະນະສຸກ ລົງສົມທົບກັບບັນດາທ້ອງຖິ່ນ ເພື່ອກຳແຫນັ້ນບັນຫາ ແລະ ເງື່ອນໄຂຕ່າງໆ ໃນການຈະຊ່ວຍໃຫ້ເມືອງ ແລະ ບ້ານເປົ້າຫມາຍເຮັດທົດລອງນັ້ນ ກາຍເປັນຕົວແບບ ເພື່ອບັນລຸເປົ້າຫມາຍສະຫັດສະວັດ ດ້ານການພັດທະນາ; ລວມທັງຊ່ວຍປັບປຸງຄຸນນະພາບ ແລະ ຍົກລະດັບການສຶກສາ ກໍຄື ສຸຂະພາບ ຂອງປະຊາຊົນໃນບ້ານ ແລະ ເມືອງເຮັດທົດລອງນັ້ນໃຫ້ດີຂຶ້ນ.

10) ໃຫ້ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມກັບທ້ອງຖິ່ນ ແລະ ຂະແຫນງການອື່ນໆ ທີ່ກ່ຽວຂ້ອງ ເພື່ອຈັດຕັ້ງການຝຶກອົບຮົມວິຊາຊີບໄລຍະສັ້ນໃຫ້ຊາວກະສິກອນ ໂດຍສະເພາະແມ່ນຄອບຄົວເອກະເທດ ແລະ ກຸ່ມຄອບຄົວ ທີ່ໄດ້ຮັບສິນເຊື່ອຈາກທະນາຄານ ເພື່ອຜະລິດເປັນສິນຄ້າ ເພື່ອເປັນການເສີມຂະຫຍາຍທ່າແຮງດ້ານຊັບພະຍາກອນດິນດອນ ແລະ ມູນເຊື້ອການທຳມາຫາກິນ ຂອງປະຊາຊົນໃນທ້ອງຖິ່ນ.

Nee.23.7.12

- ພ້ອມກັນນີ້, ກໍໃຫ້ຄົ້ນຄວ້າສ້າງເງື່ອນໄຂ ໃຫ້ປະຊາຊົນ ແລະ ລູກຫລານ ຂອງເຂົາເຈົ້າໃຫ້ເຂົ້າຝຶກອົບຮົມ ຫລື ໄດ້ຮຽນໃນໂຮງຮຽນວິຊາຊີບຂອງແຂວງ ( ຊຶ່ງປັດຈຸບັນຍັງບໍ່ທັນໄດ້ນໍາໃຊ້ຢ່າງເຕັມຄຸນປະໂຫຍດເທື່ອ);ໂດຍມີການປັບປຸງດ້ານລະບອບລະບຽບການ, ເນື້ອໃນຫລັກສູດ ແລະ ນະໂຍບາຍໃຫ້ເຫມາະສົມ.

11) ໃຫ້ກະຊວງຖະແຫລງຂ່າວ ວັດທະນາທໍາ ແລະ ທ່ອງທ່ຽວ ສົມທົບກັບແຂວງ ແລະ ເມືອງເປົ້າຫມາຍເຮັດທົດລອງ ກໍານົດໃຫ້ແຈ້ງກ່ຽວກັບຄວາມຮັບຜິດຊອບຄຸ້ມຄອງ ແລະ ອອກໃບອະນຸຍາດການອອກປ້າຍໂຄສະນາ ແລະ ການຄ້າຂາຍແຜ່ນ ວີຊີດີ ຕ່າງໆ ໃຫ້ເຂົ້າສູ່ລະບຽບການອັນຮັດກຸມ; ບັນດາຫົວຫນ່ວຍທຸລະກິດ ທ່ອງທ່ຽວ ແລະ ການບັນເທີງ ທີ່ຕັ້ງຢູ່ໃນແຕ່ລະທ້ອງຖິ່ນ ໃຫ້ຮັດກຸມ, ຄຸ້ມຄອງສື່ ສິ່ງພິມ ທັງພາຍໃນ ແລະ ຕ່າງປະເທດ, ຊີ້ນໍາສື່ຂອງລັດ ຢູ່ທ້ອງຖິ່ນ ວິທະຍຸຊຸມຊົນ ໃນການປັບປຸງເນື້ອຫາສາລະ ທີ່ຊຸກຍູ້ສົ່ງເສີມການພັດທະນາ, ການທໍາມາຫາກິນຜະລິດເປັນສິນຄ້າ ກໍຄື ການສ້າງບ້ານພັດທະນາ ແກ້ໄຂຄວາມທຸກຍາກ; ລວມທັງການເສີມຂະຫຍາຍມູນເຊື້ອວັດທະນາທໍາ ອັນດີງາມ ທີ່ເປັນເອກະລັກ ຂອງທ້ອງຖິ່ນ.

12) ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ສົມທົບກັບແຂວງ ແລະ ເມືອງເປົ້າຫມາຍເຮັດທົດລອງ ເພື່ອກໍານົດຄວາມຮັບຜິດຊອບຄຸ້ມຄອງບັນດາພື້ນຖານໂຄງລ່າງ ແລະ ພື້ນຖານວັດຖຸ-ເຕັກນິກ ດ້ານໂຍທາທິການ ເປັນຕົ້ນແມ່ນການປົກປັກຮັກສາ, ການສ້ອມແປງ ແລະ ຟື້ນຟູບູລະນະຖະຫນົນ ຫົນທາງ; ການອອກອະນຸຍາດ ແລະ ຄຸ້ມຄອງການປຸກສ້າງ, ການຂົນສົ່ງໂດຍສານ ແລະ ນໍາໃຊ້ຍານພາຫະນະປະເພດຕ່າງໆ... ລວມທັງບັນດາຫນ້າທີ່ວຽກງານວິຊາສະເພາະ ແລະ ການຄຸ້ມຄອງຂະແຫນງການ ໃຫ້ແຂວງ ແລະ ເມືອງ ໃຫ້ຈະແຈ້ງ; ພ້ອມກັນນັ້ນ ກໍມີວິທີການ ແລະ ມາດຕະການຊ່ວຍເຫລືອທ້ອງຖິ່ນ ເພື່ອໃຫ້ເຂົາເຈົ້າມີເງື່ອນໄຂ, ມີຄວາມສາມາດເປັນເຈົ້າຕົນເອງ ໃນການພັດທະນາ ແລະ ແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໄດ້ໂດຍຕົນເອງເປັນກ້າວໆ.

- ໃຫ້ເພີ່ມຄວາມເອົາໃຈໃສ່ຊີ້ນໍາບັນດາເມືອງ ແລະ ບ້ານເປົ້າຫມາຍ ທີ່ຈະສ້າງເປັນຕົວເມືອງນ້ອຍໃນຊົນນະບົດ ໃຫ້ມີທິດຂະຫຍາຍຕົວທີ່ຖືກຕ້ອງ ເຊັ່ນ: ມີການວາງແຜນ ແລະ ມີການສ້າງແຜນຜັງ ພ້ອມທັງສິ່ງອໍານວຍຄວາມສະດວກ ແລະ ລະບົບສາທາລະນຸປະໂພກ ຂັ້ນພື້ນຖານ, ມີລະບົບອະນາໄມ ແລະ ການຮັກສາສິ່ງແວດລ້ອມ ແລະ ອື່ນໆອີກ...

13) ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ສົມທົບກັບແຂວງ ແລະ ບັນດາເມືອງທົດລອງ ເພື່ອກໍານົດຄວາມຮັບຜິດຊອບ ຄຸ້ມຄອງໃຫ້ຈະແຈ້ງ ລະຫວ່າງກະຊວງ, ແຂວງ ແລະ ເມືອງ ດ້ານການອອກທະບຽນ, ການຄຸ້ມຄອງກິດຈະການ ໂຮງຈັກ ໂຮງງານ, ຫ້າງຮ້ານຕ່າງໆ ພິເສດແມ່ນການຄຸ້ມຄອງຕະຫລາດ, ຄຸ້ມຄອງລາຄາ ແລະ ຄ່າບໍລິການພາຍໃນທ້ອງຖິ່ນ, ລວມທັງການປະຕິບັດນະໂຍບາຍ ແລະ ກົນໄກການຊຸກຍູ້ ສົ່ງເສີມການຜະລິດເປັນສິນຄ້າຂອງລັດຖະບານ; ຕິດຕາມກໍາແຫນ້ນສະພາບການຊື້-ຂາຍ ຜົນຜະລິດຂອງປະຊາຊົນໃນແຕ່ລະໄລຍະ ແລະ ຄົ້ນຄວ້ານໍາສະເຫນີວິທີການແກ້ໄຂບັນຫາຕ່າງໆ ໃຫ້ທັນການ; ຕ້ອງເພີ່ມ

ທະວີບົດບາດຂອງລັດ ໃນການຊຸກຍູ້ສົ່ງເສີມການຄ້າອອກສູ່ຊົນນະບົດ, ຕອບສະໜອງຂໍ້ມູນຂ່າວສານດ້ານການຕະຫລາດ, ປົກປ້ອງຄວາມເປັນທຳໃນການຄ້າ-ຂາຍ; ເຮັດໃຫ້ການຄ້າມີບົດບາດສູງຂຶ້ນໃນການກະຕຸ້ນການຜະລິດ ແລະ ການບໍລິການ ຢູ່ແຕ່ລະທ້ອງຖິ່ນ.

14) ໃຫ້ຄະນະຈັດຕັ້ງສູນກາງພັກ ແລະ ກະຊວງພາຍໃນ ລົງເລິກຕິດຕາມ ການປັບປຸງພາລະບົດບາດ ກໍຄື ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ 15 ກະຊວງທົດລອງ ໃຫ້ສອດຄ່ອງກັບມະຕິ 03/ກມສພ ແລະ ການແບ່ງຂັ້ນຄຸ້ມຄອງ ກໍຄື ການມອບໝາຍຄວາມຮັບຜິດຊອບ ລະຫວ່າງກະຊວງ-ອົງການຂັ້ນສູນກາງກັບທ້ອງຖິ່ນ ລວມທັງການການປັບປຸງສັບຊ້ອນ ຈັດຕັ້ງກົງຈັກ ແລະ ບຸກຄະລະກອນ ໃຫ້ໄປຕາມທິດ ເພີ່ມສິດ ແລະ ເພີ່ມຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ, ທັງສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ຂອງວຽກງານຕົວຈິງ ຄື:

+ ການກຳນົດສິດ ແລະ ໜ້າທີ່ຮັບຜິດຊອບດ້ານການບໍລິຫານ ແລະ ການປົກຄອງໃຫ້ແຂວງ ແລະ ເມືອງ ຕ້ອງສອດຄ່ອງກັບບົດບາດນຳພາຮອບດ້ານ ຂອງຄະນະພັກ; ໃນນັ້ນ ອັນທີ່ຕ້ອງເອົາໃຈໃສ່ເປັນພິເສດແມ່ນການກຳນົດສິດໃນການຄຸ້ມຄອງເສດຖະກິດ-ສັງຄົມ ກໍຄື ການອຳນວຍຄວບຄຸມ-ຊີ້ນຳວຽກງານວິຊາສະເພາະ ຂອງຂະແໜງການ ທີ່ກະຊວງ-ອົງການສູນກາງມອບໃຫ້ແຂວງ ແລະ ທີ່ແຂວງມອບໃຫ້ເມືອງ ຈະຕ້ອງລະອຽດຈະແຈ້ງ ແລະ ບັນທຶກເປັນລາຍລັກອັກສອນໃນຮູບແບບຂອງນິຕິກຳ.

+ ໃຫ້ກຳນົດລະບົບການຈັດຕັ້ງກົງຈັກ ຂອງບັນດາເມືອງທົດລອງ ໃຫ້ເໝາະສົມຕື່ມອີກ ໂດຍສະເພາະແມ່ນເມືອງວິລະຊົນ, ເມືອງຈຸດສຸມພັດທະນາ ທີ່ຖືກຈັດເປັນເມືອງປະເພດ 2 ແລະ 3 ໃນເມື່ອກ່ອນນັ້ນ ແນໃສ່ເຮັດໃຫ້ການຈັດຕັ້ງກົງຈັກຂອງເມືອງ **ແທດເໝາະກັບການເປັນຫົວໜ່ວຍ ແຜນການ ແລະ ຫົວໜ່ວຍການເງິນໜຶ່ງ ທີ່ຂຶ້ນກັບແຂວງ.**

+ ກຳນົດລະບຽບການ ແລະ ກົນໄກ ກ່ຽວກັບການໃຫ້ເຈົ້າແຂວງ ແລະ ເຈົ້າເມືອງ ( ເມືອງທົດລອງ ) ແຕ່ງຕັ້ງ ຫລື ປົດຕຳແໜ່ງພະນັກງານ ຕາມທີ່ໄດ້ກຳນົດໄວ້ໃນມະຕິ 03 / ກມສພ ເພື່ອຮອງຮັບການຈັດຕັ້ງປະຕິບັດຕົວຈິງ; ພ້ອມກັນນັ້ນ ກໍໃຫ້ລົງເລິກຕິດຕາມ-ກຳແໜ້ນສະພາບພະນັກງານຢູ່ແຕ່ລະເມືອງທົດລອງ ແລະ ຄົ້ນຄວ້າວິທີການເພີ່ມຈຳນວນພະນັກງານໃຫ້ແກ່ເມືອງ ລວມທັງການຝຶກອົບຮົມຍົກລະດັບພະນັກງານທາງດ້ານຄຸນນະພາບ ເພື່ອໃຫ້ເມືອງມີບຸກຄະລະກອນພຽງພໍ ແລະ ສາມາດສ້າງຕົນເອງໃຫ້ມີຄວາມເຂັ້ມແຂງຮອບ ດ້ານໄດ້ເປັນກ້າວໆ.

+ ໃຫ້ຄົ້ນຄວ້າຜັນຂະຫຍາຍເປັນອັນລະອຽດ ກ່ຽວກັບການສ້າງບ້ານເປັນຫົວໜ່ວຍພັດທະນາຕາມທີ່ໄດ້ກຳນົດໄວ້ໃນຂໍ້ 4 ຂອງມະຕິ 03/ກມສພ ໂດຍສະເພາະແມ່ນການເລືອກຕັ້ງ ແລະ ແຕ່ງຕັ້ງນາຍບ້ານ; ການເພີ່ມເງິນອຸດໜູນແກ່ນາຍບ້ານ ແລະ ການປະຕິບັດລະບອບອຸດໜູນແກ່ເປົ້າໝາຍອື່ນໆ; ການກຳນົດກົງຈັກການຈັດຕັ້ງຂອງບ້ານ ຢູ່ໃນເທດສະບານຕົວເມືອງ ແລະ ບ້ານໃນຊົນນະບົດ; ການປະກອບພະນັກງານດ້ານການປົກຄອງ, ປູກຝັງ, ລ້ຽງສັດ... ໄປ

ປະຈຳການຢູ່ບ້ານ ເພື່ອຊ່ວຍນາຍບ້ານໃນການຄຸ້ມຄອງປະຊາຊົນ ແລະ ພັດທະນາບ້ານ; ລະບຽບການອອກເອກະສານ ແລະ ແບບຟອມເອກະສານສຳລັບຂັ້ນບ້ານ ແລະ ການເກັບຄ່າທຳນຽມຕ່າງໆ; ຕະຫລອດເຖິງການຈັດເກັບພາສີອາກອນ ແລະ ການຄຸ້ມຄອງກອງທຶນຕ່າງໆ ຂອງບ້ານ.

15) ໃຫ້ຄະນະໂຄສະນາອົບຮົມສູນກາງພັກ ປະສານສົມທົບກັບອົງການ-ຂະແໜງການກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດໂຄງການຝຶກອົບຮົມ**ຍົກລະດັບຄວາມຮູ້ດ້ານແນວທາງການເມືອງ-ການປົກຄອງ ແລະ ການສ້າງບ້ານພັດທະນາ** ໃຫ້ແກ່ພະນັກງານ ສະມາຊິກພັກ ແລະ ປະຊາຊົນຜູ້ເປັນຫລັກແຫລ່ງ ຢູ່ຮາກຖານ ໂດຍສຸມໃສ່ບ້ານ ແລະ ເມືອງເປົ້າຫມາຍທົດລອງສາກ່ອນ; ເຮັດໃຫ້ການຝຶກອົບຮົມດຳເນີນໄປຕິດພັນກັບຂະບວນການວຽກງານໃນດ້ານຕ່າງໆຢູ່ຮາກຖານ ໂດຍເລີ່ມແຕ່ສົກປີ 2012-2013 ນີ້ໄປໂລດ.

- ພ້ອມກັນນີ້ ກໍໃຫ້ຍູ້ແຮງວຽກງານໂຄສະນາບຸກຄະລົນ, ການເຜີຍແຜ່ຄອບຄົວຕົວແບບດີເດັ່ນ ແລະ ຜູ້ເປັນແບບຢ່າງນຳຫນ້າໃນຂະບວນການວຽກງານຕົວຈິງ; ນຳເອົາບົດຮຽນການທຳມາຫາກິນ ແລະ ການນຳໃຊ້ວິທະຍາສາດ-ວິທະຍາການອັນກ້າວຫນ້າ ມີປະສິດທິຜົນໄປເຜີຍແຜ່ ແນະນຳໃຫ້ກວ້າງຂວາງ ທົ່ວເຖິງພື້ນຖານປະຊາຊົນ.

16) ໃຫ້ແຕ່ລະກະຊວງ, ອົງການອ້ອມຂ້າງສູນກາງ, ນະຄອນຫລວງວຽງຈັນ, ແຂວງ ແລະ ເມືອງທົດລອງໃນທົ່ວປະເທດຮີບຮ້ອນຄົ້ນຄວ້າ ກຳແຫນ້ນເນື້ອໃນຂອງຄຳສັ່ງແນະນຳເພີ່ມເຕີມສະບັບນີ້ ແລ້ວນຳໄປຜັນຂະຫຍາຍເປັນອັນລະອຽດ ແລະ ຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບ ເພື່ອປະກອບສ່ວນເຮັດໃຫ້ການເຮັດທົດລອງໃນສົກປີ 2012-2013 ນີ້ ໄດ້ຮັບຜົນດີ.

ຄຳສັ່ງແນະນຳເພີ່ມເຕີມສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ປະຈຳການຄະນະເລຂາທິການສູນກາງພັກ
ຫົວຫນ້າຄະນະຮັບຜິດຊອບເຮັດທົດລອງ ມະຕິ 03/ກມສພ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ

ບຸນຍັງ ວໍລະຈິດ